ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 704 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2023

**ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**

**- ຫົວໜ່ວຍວິສາຫະກິດທີ່ມີລາຍຊື່ຕາມແຈ້ງການສະບັບນີ້**

**ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດ ຕາມການສະເໜີຂອງ ສ່ວຍສາອາກອນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ສະໂນດນຳສົ່ງ ເລກທີ 2078/ພອຄນວ.ທຄວ, ລົງວັນທີ 13 ທັນວາ 2023.

ບົນພື້ນຖານ ສະໂນດນຳສົ່ງ ເລກທີ 2078/ພອຄນວ.ທຄວ, ລົງວັນທີ 13 ທັນວາ 2023 ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ກ່ຽວກັບການນຳສົ່ງໜັງສືສະເໜີແຈ້ງໂຈະການເຄື່ອນໄຫວຂອງຫົວໜ່ວຍວິສາຫະກິດທີ່ອອກທະບຽນວິສາຫະກິດແລ້ວ ບໍ່ເຂົ້າໄປແຈ້ງເສຍອາກອນ ຢູ່ ສ່ວຍສາອາກອນປະຈຳ ເມືອງ ໄຊເສດຖາ. ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດຈຳນວນ 20 ຫົວໜ່ວຍ ທີ່ມີລາຍຊື່ຄັດຕິດຕາມແຈ້ງການສະບັບນີ້ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດ ເນື່ອງຈາກວ່າບໍ່ໄດ້ເຂົ້າໄປພົວພັນນຳເຈົ້າໜ້າທີ່ສ່ວຍສາອາກອນເພື່ອແຈ້ງເສຍອາກອນ. (ລາຍຊື່ວິສາຫະກິດທີ່ຖືກແຈ້ງໂຈະການເຄື່ອນໄຫວທຸລະກິດ ສາມາດກວດສອບເພີ່ມເຕີມທີ່ www.ned.moic.gov.la ຫຼື facebook: ກົມທະບຽນວິສາຫະກິດ ຫຼື QR Code ທີ່ຄັດຕິດແຈ້ງການສະບັບນີ້);

2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີລາຍລະອຽດດັ່ງນີ້:

2.1 ຕ້ອງເຂົ້າໄປພົວພັນນຳ ເຈົ້າໜ້າທີ່ສ່ວຍສາອາກອນປະຈຳ ເມືອງ ໄຊເສດຖາ ເພື່ອປະກອບເອກະສານແຈ້ງເສຍອາກອນ ໃຫ້ສຳເລັດ ແລ້ວນຳເອົາໜັງສືຢັ້ງຢືນການການພົວພັນດັ່ງກ່າວມາແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ;

2.2 ຫ້າມເຄື່ອນໄຫວທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເກັບຮັກສາໄວ້;

3. ການໂຈະການເຄື່ອນໄຫວທຸລະກິດ ມີຜົນປະຕິບັດ ນັບແຕ່ວັນທີ 25 ທັນວາ 2023 ເປັນຕົ້ນໄປ;

4. ຖ້າລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ແຈ້ງມາຍັງທ່ານເພື່ອຊາບ.

ລາຍຊື່ວິສາຫະກິດ

ຄ້າງ 22-12-2023

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ສຸລີຄຳ ແຈ້ງສະຫວ່າງ